**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 11 ຕຸລາ 2009 (10-11-2009)**

---

**<u>ວິຣະຊົນຜູ້ທຳການສູ້ຮົບ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ມາຣະໂກ 12:13-17, 28-31, 38-40)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ພຣະເຢຊູ ໄດ້ອອກສູ້ຮົບໃນສມັຍທີ່ພຣະອົງຍັງຊົງຮັບໃຊ້ຢູ່ ແລະພຣະອົງຍັງຊົງຮຽກເອີ້ນໃຫ້ຜູ້ທີ່ຕິດຕາມພຣະອົງທຳການສູ້ຮົບເຊັ່ນກັນ. ສນາມຮົບຂອງພວກເຮົາແມ່ນກ່ຽວກັບການຂັດແຍ້ງລະຫວ່າງຄວາມດີ ແລະຄວາມຊົ່ວ- ທາງຂອງພຣະເຈົ້າ ແລະທາງຂອງໂລກ. ການຕໍ່ສູ້ນີ້ລວມຢູ່ໃນການຂັດແຍ້ງດ້ວຍອຳນາດຂອງໂລກ ພ້ອມທັງຄວາມເຂົ້າໃຈຜິດໃນຫລັກການສອນພຣະຄັມພີ ແລະສາສນາທີ່ຕົກທອດຕາມປະເພນີ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>**

ຄຣິສຕຽນຜູ້ທີ່ໃຊ້ຊີວິດເອົາຈິງເອົາຈັງກ່ຽວກັບຄວາມເຊື່ອຈະປະສົບກັບການຂັດແຍ່ງທາງຝ່າຍໂລກ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ ຈະຊ່ວຍໃຫ້ທ່ານມີກຳລັງໃຈຕໍ່ສູ້ເພື່ອພຣະເຈົ້າ ໃນສັງຄົມທີ່ບໍ່ມີພຣະເຈົ້າ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ຈົ່ງບອກໃຫ້ນັກຮຽນຮູ້ວ່າ 3 ບົດຮຽນຕໍ່ໄປນີ້ແມ່ນແນໃສ່ການສູ້ຮົບຮອບດ້ານຂອງພຣະເຢຊູຜູ້ທີ່ຊົງຮຽກເອີ້ນໃຫ້ຜູ້ຕິດຕາມພຣະອົງທຳການສູ້ຮົບຮ່ວມກັບພຣະອົງ. ພຣະເຢຊູໄດ້ທຳການສູ້ຮົບໃນສມັຍພຣະອົງຍັງຮັບໃຊ້ຢູ່ໃນແຜ່ນດິນໂລກນີ້ ແລະໄດ້ຊົງຮຽກເອີ້ນຜູ້ທີ່ຕິດຕາມພຣະອົງໃຫ້ທຳການສູ້ຮົບເໝືອນກັນ. ການສູ້ຮົບຂອງພວກເຮົາແມ່ນການຂັດແຍ້ງລະຫວ່າງ <u>ຖືກ</u> ກັບ <u>ຜິດ</u>.
- **ຄຳຖາມ**: ໃນລະຫວ່າງອາທິດນີ້ກັບອາທິດທີ່ແລ້ວຂອງພຣະເຢຊູຢູ່ໃນໂລກນີ້ພຣະອົງໄດ້ຊົງສຳແດງຕໍ່ຜູ້ຕິດຕາມພຣະອົງວ່າພຣະອົງເປັນນັກຮົບຜູ້ອາດຫານ ທີ່ສູ້ຮົບກັບສັດຕຣູຂອງພຣະອົງຢ່າງໃດແດ່?
- ຖ້າພຣະເຢຊູຍັງຢູ່ແຜ່ນດິນໂລກນີ້, ແມ່ນການສູ້ຮົບແນວໃດທີ່ພຣະອົງຈະສູ້ຮົບແທນພວກເຮົາ?

1. **<u>ປະເຊີນກັບຄວາມຈົງຮັກພັກດີ:</u>** (ມາຣະໂກ 12:13-17)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 12:13-17
- ນັກຮົບຜູ້ອາດຫານໄດ້ປະເຊີນໜ້າກັບພວກຟາຣີຊາຍທີ່ມີກົນອຸບາຍຈະຈັບຜິດພຣະເຢຊູ.
- ໃນທີ່ຈະຊີ້ໃຫ້ພວກເຮົາເຫັນເຖິງພວກຟາຣີຊາຍ ແລະພວກເຮໂຣດໄດ້ພາກັນໃຊ້ສອງຢ່າງທີ່ສຳຄັນໃນການຈອບຈັບຜິດພຣະເຢຊູຄື: ທາງດ້ານການເມືອງ ແລະທາງສາສນາ. ໃຫ້ສົນທະນາກັນເຖິງເຫດຜົນທີ່ພວກສັດຕຣູຂອງພຣະອົງບໍ່ໄດ້ຊົຍຊະນະດ້ວຍການເອົາເຣື່ອງການເສັຽຊ່ວຍໃຫ້ຣັຖບານໂຣມັນ. ເຂົາໄດ້ມີຄວາມປລາດໃຈຕໍ່ຄຳຕອບຂອງພຣະເຢຊູທີ່ໄດ້ສະແດງເຖິງຄວາມຈົງຮັກພັກດີຕໍ່ຈັກກະພັດໂຣມັນ ແລະຕໍ່ພຣະເຈົ້າ.
- ຂໍໃຫ້ອ່ານຂໍ້ທີ 15-17 ອີກເທື່ອນຶ່ງ ແລ້ວມາສົນທະນາເບິ່ງວ່າ ພຣະເຢຊູໃຊ້ເງິນຫລຽນເປັນສິ່ງຢັ້ງຢືນເພື່ອຊີ້ໃຫ້ເຫັນເຖິງຄວາມຈົງຮັກພັກດີແນວໃດ. ຊຶ່ງຜົນສຸດທ້າຍ ຄວາມຈົງຮັກພັກດີຂອງຄຣິສຕຽນນັ້ນເປັນຂອງພຣະເຈົ້າເທົ່ານັ້ນ.
- ພວກສັດຕຣູໄດ້ມີຄວາມປລາດໃຈທີ່ໄດ້ເຫັນພຣະເຢຊູໄຊໃຫ້ເຂົາເຫັນເປັນຄຳຕອບນັ້ນທ່ານມີຄວາມຄິດແນວໃດ?
- ທ່ານໄດ້ຮຽນຈາກປະສົບການຂອງພວກເຮໂຣດ ແລະພວກຟາຣີຊາຍໃນຄວາມປລາດໃຈຂອງເຂົາແນວໃດແດ່?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ມາຣະໂກ 12:13-17)

1. ໃນເມື່ອຄຣິສຕຽນປະເຊີນໜ້າກັບຄວາມຂັດແຍ້ງທາງຝ່າຍໂລກຕາມທັມມະດາພວກເຮົາຈະຕ້ອງເຮັດແນວໃດ?
2. ຄົນຂອງພຣະເຈົ້າຈະທຸ່ມເທໃນການດຳຣົງຊີວິດທີ່ສັດຊື່ຢູ່ໃນໂລກນີ້ໄດ້ຢ່າງໃດ?
3. ບາງສິ່ງບາງຢ່າງທີ່ຄຣິສຕຽນຈະຕ້ອງທຳເພື່ອຊົຍຊະນະຕໍ່ວັດຖຸ ແລະຈິດໃຈແຫ່ງຊີວິດນັ້ນແມ່ນຫຍັງ?
4. ທ່ານຮູ້ໄດ້ຢ່າງໃດວ່າຄວາມຈົງຮັກພັກດີຂອງທ່ານເປັນຂອງພຣະເຈົ້າ ແລະບໍ່ແມ່ນທາງຝ່າຍໂລກ?

2. **<u>ປະເຊີນກັບຣະດັບສິ່ງສຳຄັນໃນຊີວິດ:</u>** (ມາຣະໂກ 12:28-31)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ມາຣະໂກ 12:28-31
- ໃຫ້ນັກຮຽນຂຽນສອງພຣະບັນຍັດທີ່ສຳຄັນທີ່ສຸດ. ໃຫ້ນັກຮຽນຕອບຄຳຖາມນີ້: ພຣະບັນຍັດເຫລົ່ານີ້ ແມ່ນອັນໃດທີ່ເປັນການເປີດເຜີຍເຣື່ອງພຣະລັກສະນະຂອງພຣະເຈົ້າ? ແລ້ວຂຽນຄຳຕອບໃສ່ກະດານ
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມພຣະບັນຍັດສອງ 6:5. ອັນນີ້ເປັນນຶ່ງໃນຈຳນວນພຣະບັນຍັດ 10 ຂໍ້ ເປັນໄປໄດ້ບໍ່ທີ່ພວກເຮົາຈະປະຕິບັດໄດ້ຢ່າງຄົບຖ້ວນ ແລະກຳໜົດທຸກຂໍ້ໃນປຶ້ມພຣະຄັມພີນັ້ນ.
- ພີ່ນ້ອງທີ່ຢູ່ຮອບຂ້າງຂອງທ່ານເຂົາເຈົ້າມີທ່າທີທີ່ບໍ່ເໝາະສົມ. ເຂົາບໍ່ຮັກ ຫລື ບໍ່ເບິ່ງແຍງເອື້ອເຟື້ອເພື່ອແຜ່ຊຶ່ງກັນແລະກັນ. ເຂົາມາຂໍໃຫ້ທ່ານຊ່ອຍເຫລືອເຂົາເຈົ້າ . ຄຳຖາມຄື:

  1.ທ່ານຈະຊ່ອຍໃຫ້ເຂົາເຈົ້າໃຫ້ພົບກັບຄວາມຕ້ອງການຂອງເຂົາເຈົ້າ ໃຫ້ເຂົາເຈົ້າມີຄວາມເຂົ້າໃຈໃນພຣະບັນຍັດອັນດີສອງຂໍ້ນີ້ໄດ້ແນວໃດ?

  2 ທ່ານຈະໃຊ້ພຣະທັມ ແລະຂໍ້ພຣະຄຳຕອນໃດເພື່ອໃຫ້ເຂົາເຈົ້າເຂົ້າໃຈວ່າແມ່ນຄວາມຂັດແຍ່ງອັນໃດທີ່ເຮັດໃຫ້ເຂົາເຈົ້າມີຕໍ່ກັນແລະກັນ?

3. ທ່ານຄວນແນະນຳພຣະເຢຊູຜູ້ເປັນນັກຣົບທີ່ອາດຫານ ຜູ້ທີ່ຕັ້ງມາຕຖານສຳລັບການມີຊີວິດຢູ່ຢ່າງ ຊັຍຊະນະໂດຍວິທີໃດ?

4. ໃນສ່ວນຕົວຂອງທ່ານຈະໃຊ້ຄຳເວົ້າແບບໃດທີ່ໂຊຄວາມຮັກຂອງທ່ານທີ່ມີຕໍ່ພຣະເຈົ້າ ແລະຕໍ່ເພື່ອນບ້ານຂອງທ່ານ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມາຣະໂກ 12:28-31

1. ຄວາມຮັກຂອງພຣະເຈົ້າໄດ້ເຮັດໃຫ້ທ່ານຮັກເພື່ອນບ້ານຂອງທ່ານງ່າຍຂຶ້ນໄດ້ແນວໃດ?
2. ຖ້າທ່ານຖືກຂໍໃຫ້ເປັນຜູ້ມີສິດທີນຶ່ງໃນຊີວິດ, ທ່ານຈະຕອບວ່າຢ່າງໃດ?
3. ທ່ານໄດ້ອາດພາບເບິ່ງຄຣິສຕຽນຜູ້ທີ່ຮັກໂລກວ່າເປັນແນວໃດ?
4. ໃຫ້ກາຍມາເປັນອັຄສາວົກທີ່ມີຊັຍຊະນະ, ທ່ານຈະຈັດຕາຕະລາງທີ່ທ່ານຕ້ອງການທາງສ່ວນຕົວແນວໃດ?

3 . **<u>ປະເຊີນກັບຄົນຫລອກລວງ:</u>** (ມາຣະໂກ 12:38-40)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມາຣະໂກ 12:38-40
- ພວກຄົນໜ້າໄຫວ້ຫລັງຫລອກຄັດລອກແບບຢ່າງຄວາມຈິງຂອງພຣະເຢຊູ.
- ໃຫ້ນັກຮຽນບົ່ງຊີ້ບາງຢ່າງຂອງການກ່າວຫາຕໍ່ສູ້ພຣະເຢຊູທີ່ພວກນັກສາສນາກຸ່ມນີ້ໄດ້ສ້າງຂຶ້ນ.
- ເປັນດ້ວຍເຫດໃດພຣະເຢຊູຈຶ່ງຊົງເຕືອນຄົນຜູ້ທີ່ຮ່ວມກັນພູມໃຈເຣື່ອງຂອງຝ່າຍໂລກ ແລະຕັ້ງເປົ້າໝາຍ ແລະເຣື່ອງການກະທຳການທາລຸນຍິງໝ້າຍ? ຊຶ່ງຊີ້ອອກໃຫ້ເຫັນວ່າກຸ່ມເຄັ່ງຄັດສາສນາເຫລົ່ານີ້ໄດ້ຂາດຈິດໃຈຝ່າຍຈິດວິນຍານ ແລະຄວາມຮັກ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມາຣະໂກ 12:38-40

1. ເປັນຫຍັງຄຣິສຕຽນທັງຫລາຍຈຶ່ງຮຽກຮ້ອງໃຫ້ເປັນໄປຕາມທີ່ເຂົາເຈົ້າເປັນຢູ່?
2. ເຮັດແນວໃດທ່ານຈຶ່ງຈະຈື່ຈຳຄົນທີ່ເປັນລຸ້ນດຽວກັນໄດ້?
3. ເຮັດແນວໃດທ່ານຈະອອກໄປໜູນໃຈ ໄປເອົາຄົນວັທນະທັມດຽວກັນກັບທ່ານທີ່ບໍ່ມີພຣະເຈົ້າເຂົ້າມາຫາພຣະເຈົ້າໄດ້?
4. ຖ້າຫາກຄຣິສຕຽນລະເລີຍ ບໍ່ເອົາໃຈໃສ່ ຫລືໃຊ້ທາງຜິດຕໍ່ຄົນທຸກຈົນແລະຕໍ່ຄົນທີ່ກຳລັງຕ້ອງການ ແລ້ວແມ່ນອັນຕະລາຍແນວໃດຈະເກີດຂຶ້ນ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ຊັຍຊະນະຂອງຄຣິສຕຽນທັງຫລາຍຢູ່ທີ່ພວກເຮົາໂຄຣົບຜູ້ທີ່ມີອຳນາດ ແລະຈຸດປະສົງຂອງຣັຖບານຢ່າງເໝາະສົມ ແຕ່ໃຫ້ມອບຄວາມຈົງຮັກພັກດີຂອງພວກເຮົາໃຫ້ກັບພຣະເຈົ້າ.
- ການຮັກພຣະເຈົ້າເປັນພລັງໃນການເຊື່ອມຕໍ່ຄວາມຮັກຂອງພວກເຮົາໃຫ້ແກ່ເພື່ອນບ້ານ ແລະການມອງເຫັນຄວາມຕ້ອງການຂອງເຂົາເຈົ້າກ່ອນຂອງພວກເຮົາເອງ.